ທະນາຄານອິນໂດຈີນ
INDOCHINA BANK

# ຂໍ້ກຳນົດ ແລະ ເງື່ອນໄຂການນຳໃຊ້ຜະລິດຕະພັນ ບັດເຄຣດິດວີຊາ ທະນາຄານອິນໂດຈີນ

## ສາລະບານ


1. ການເລືອກຜະລິດຕະພັນທີ່ເໝາະສົມສຳລັບທ່ານ
2. ຜະລິດຕະພັນບັດເຄຣດິດ
3. ວົງເງິນຈຳກັດຂອງບັດເຄຣດິດ
4. ວົງເງິນລ່ວງໜ້າຂອງບັດເຄຣດິດ
5. ການໂອນຍອດຍັງເຫຼືອ
6. ດອກເບ້ຍ, ຄ່າທຳນຽມ ແລະ ຄ່າບໍລິການ
7. ຄວາມຮັບຜິດຊອບ
8. ການບໍລິການເພີ່ມຕື່ມສຳລັບບັນຊີ
9 ການຊຳລະ
10. ການຍົກເລີກ ແລະ ຖອດຖອນ
11. ການປັບປຸງ
12. ທຸລະກຳທີ່ບໍ່ໜ້າເຊື່ອຖື
13. ຄວາມໝາຍຄຳສັບ


## ແຈ້ງການສຳຄັນ

### ເອກະສານສະບັບນີ້ທ່ານຕ້ອງທຳຄວາມເຂົ້າໃຈ ແລະ ຍິນຍອມເຫັນດີພາຍໃຕ້ຂໍ້ກຳນົດ ແລະ ເງື່ອນໄຂດັ່ງຕໍ່ໄປນີ້.

ເງື່ອນໄຂ ແລະ ຂໍ້ກຳນົດທີ່ຖືກວາງອອກສຳລັບຜະລິດຕະພັນບັດເຄຣດິດຂອງທ່ານສະບັບນີ້, ທ່ານຈະຕ້ອງທຳຄວາມເຂົ້າໃຈຢ່າງລະອຽດ ພ້ອມໆກັບເງື່ອນໄຂທີ່ກ່ຽວຂ້ອງກັບລູກຄ້າ, ແບບແນະນຳຜະລິດຕະພັນພາຍໃຕ້ຂໍ້ຕົກລົງທີ່ທະນາຄານວາງອອກໃນຂອບເຂດຂອງຄວາມບໍ່ສອດຄ່ອງກັນລະຫວ່າງຂໍ້ກຳນົດດັ່ງກ່າວນີ້ ແລະ ຂໍ້ກຳນົດຂອງລູກຄ້າທີ່ບໍ່ເທົ່າທຽມກັນ.

## ຄຳອະທິບາຍ

ຄຳອະທິບາຍທີ່ຖືກພິມໃນແນວອຽງ ແລະ ຄຳສັບທີ່ກຳນົດໄວ້ໃນຂໍ້ຕົກລົງທາງທະນາຄານຂອງພວກເຮົາຈະມີຄວາມໝາຍຕາມທີ່ກຳນົດໄວ້ໃນຂໍ້ກຳນົດສຳລັບລູກຄ້າຂອງພວກເຮົາ ເວັ້ນແຕ່ວ່າຈະກຳນົດໄວ້ເປັນຢ່າງອື່ນໃນທີ່ນີ້. ຄຳສັບເພີ່ມຕື່ມທີ່ກຳນົດໄວ້ທີ່ຖືກໃຊ້ກັບຜະລິດຕະພັນທີ່ອ້າງເຖິງໃນຂໍ້ກຳນົດ ແລະ ເງື່ອນໄຂສະບັບນີ້ ຈະມີຄວາມໝາຍດຽວກັນກັບອະທິບາຍໄວ້ໃນຕອນທ້າຍຂອງເອກະສານສະບັບນີ້

## 1. ການເລືອກຜະລິດຕະພັນທີ່ເໝາະສົມສຳລັບທ່ານ

ພວກເຮົານຳສະເໜີຜະລິດຕະພັນບັດເຄຣດິດທີ່ຫຼາກຫຼາຍ ເຊິ່ງອອກແບບມາເພື່ອໃຫ້ເໝາະສົມກັບຄວາມຕ້ອງການດ້ານການທະນາຄານຮູບແບບສ່ວນບຸກຄົນຂອງທ່ານ ທີ່ໄດ້ຜ່ານຈາກການໂອ້ລົມລະຫວ່າງທ່ານ ແລະ ພວກເຮົາ. ບັນດາປະເພດບັດເຄຣດິດທີ່ພວກເຮົານຳສະເໜີແມ່ນຖືກລະບຸໄວ້ໃນແຜ່ນພັບນຳສະເໜີຜະລິດຕະ ພັນ ຫຼື ໂບຣຊົວ. ຫາກທ່ານຕ້ອງການລາຍລະອຽດກ່ຽວກັບຄຸນນະສົມບັດໃດໆເພີ່ມຕື່ມ ຫລື ຂໍ້ກຳນົດການໃຊ້ກັບບັດເຄຣດິດໃດໆ ກະລຸນາຕິດຕໍ່ຫາພວກເຮົາໄດ້ ເຊິ່ງພວກເຮົາຍິນດີຕອບສະໜອງຂໍ້ມູນທັງໝົດທີ່ທ່ານຕ້ອງການ

## 2. ຜະລິດຕະພັນບັດເຄຣດິດ

### ການເປີດໃຊ້ບັດເຄຣດິດ

2.1 ພວກເຮົາສາມາດອອກບັດເຄຣດິດໃຫ້ທ່ານໄດ້, ພ້ອມດ້ວຍບັດເສີມສຳລັບຜູ້ທີ່ຈະຖືບັດເສີມຕ່າງໆຕາມການຮຽກຮ້ອງຂອງທ່ານ

### ການຮັບບັດ

2.2 ທ່ານຈະສາມາດຮັບບັດເຄຣດິດເປັນການສ່ວນຕົວຈາກທະນາຄານໄດ້ທັນທີ, ເມື່ອມີການຕິດຕໍ່ຜ່ານທາງໂທລະສັບ, ຂໍ້ຄວາມ, ຫຼື ອີເມວເພື່ອແຈ້ງຂໍໃຫ້ທ່ານມາຮັບເອົາບັດຂອງທ່ານ

### ຂັ້ນຕອນການເປີດນຳໃຊ້

2.3 ເຈົ້າຂອງບັດ/ຜູ້ຖືບັດແຕ່ລະທ່ານ ຕ້ອງປະຕິບັດຕາມຂັ້ນຕອນການເປີດນຳໃຊ້ທີ່ຈະມີການແຈ້ງເຕືອນເປັນແຕ່ລະໄລຍະ

### ການນຳໃຊ້ບັດເຄຣດິດ

2.4 ເງື່ອນໄຂຂໍ້ຕົກລົງທາງທະນາຄານຂອງພວກເຮົາ ແມ່ນຖືກກຳນົດຕໍ່ການນຳໃຊ້ບັດເຄຣດິດແຕ່ລະຄັ້ງໄວ້ແລ້ວ. ເຊິ່ງຫາກຜູ້ຖືບັດບໍ່ເຫັນດີກັບເງື່ອນໄຂເຫຼົ່ານັ້ນ ກໍ່ສາມາດບໍ່ລົງລາຍເຊັນນຳໃຊ້ບັດ ຫຼື ເຮັດທຸລະກຳໃດໆຕໍ່ບັດ

2.5 ເມື່ອມີການນຳໃຊ້ບັດເຄຣດິດຄັ້ງທຳອິດ ແມ່ນຖືວ່າທ່ານຍອມຮັບຕໍ່ເງື່ອນໄຂຂໍ້ຕົກລົງທາງທະນາຄານຂອງພວກເຮົາ

2.6 ທ່ານຕ້ອງຮັບປະກັນວ່າ ບັດເຄຣດິດແມ່ນຖືກນຳໃຊ້ໂດຍທ່ານເທົ່ານັ້ນ. ສ່ວນບັດເສີມໃດໆທີ່ອອກໃຫ້ສຳລັບບຸກຄົນອື່ນທີ່ມີສິດນຳໃຊ້ນັ້ນ ແມ່ນຈະຖືກນຳໃຊ້ພາຍໃຕ້ຄວາມຮັບຜິດຊອບຂອງທ່ານແຕ່ພຽງຜູ້ດຽວ ແລະ ຈະຖືວ່າຫາກຖືກນຳໃຊ້ໂດຍບຸກຄົນດັ່ງກ່າວ ແມ່ນການນຳໃຊ້ຂອງທ່ານເອງ

### ບັດເສີມ

2.7 ພວກເຮົາຈະມອບບັດເສີມໃຫ້ທ່ານ, ລະຫັດຕົວເລກ/ລະຫັດຜ່ານ ແລະ ການສື່ສານທັງໝົດໃຫ້

2.8 ການສື່ສານໃດໆທີ່ມອບໃຫ້ທ່ານກ່ຽວກັບຜູ້ຖືບັດເສີມ ແມ່ນຈະຖືກມອບໃຫ້ທ່ານເອງ

2.9 ທ່ານຈະຕ້ອງຮັບຜິດຊອບໃນການປະຕິບັດຕໍ່ຜູ້ຖືບັດເສີມຂອງທ່ານຕ່າງໆ ໃຫ້ຕົກລົງພາຍໃຕ້ຂໍ້ຜູກພັນຕາມຄຳແນະນຳຂອງທ່ານເອງ

### ປະເພດ ຫຼື ບັດ

2.10 ພວກເຮົາສາມາດປ່ຽນປະເພດບັດປະຈຸບັນຂອງທ່ານ ເປັນບັດເຄຣດິດປະເພດອື່ນໄດ້ຕາມຄວາມເໝາະສົມຂອງພວກເຮົາ

2.11 ພວກເຮົາຈະບໍ່ຮັບຜິດຊອບໃນການເປັນຕົວແທນໂປໂມຊັນ ຫຼື ພາລະຜູກພັນໃດໆທີ່ກະທຳໂດຍຄູ່ຄ້າທີ່ເປັນຄູ່ຮ່ວມທຸລະກິດ

## 3. ການກຳນົດວົງເງິນ

3.1 ການກຳນົດວົງເງິນມາດຕະຖານຄື 95% ຂອງຈຳນວນເງິນຝາກປະຈຳ ເຊິ່ງໃຊ້ເປັນຫຼັກປະກັນສຳລັບບັດເຄຣດິດ. ທາງທະນາຄານອາດມີການປ່ຽນແປງວົງເງິນສິນເຊື່ອເວລາໃດກໍ່ໄດ້

3.2 ວົງເງິນເຄຣດິດ ແມ່ນວົງເງິນໂດຍລວມທີ່ໃຊ້ກັບບັດເຄຣດິດທັງໝົດທີ່ອອກໃຫ້ທ່ານ

3.3 ວົງເງິນສິນເຊື່ອ ແມ່ນຍັງອີງຕາມຂໍ້ບັງຄັບພື້ນຖານ

### ການເພີ່ມວົງເງິນ

3.4 ການຂໍເພີ່ມວົງເງິນທຸກຄັ້ງ ແມ່ນຈະຕ້ອງເປັນລາຍລັກອັກສອນ ໂດຍການຕື່ມແບບຟອມຂໍເພີ່ມວົງເງິນ

## 4. ເງິນສົດລ່ວງໜ້າ

### ວິທີການຮັບເງິນສົດລ່ວງໜ້າ

ຜູ້ຖືບັດສາມາດຂໍຮັບການເບີກເງິນສົດລ່ວງໜ້າໄດ້ ໂດຍຂຶ້ນກັບຄວາມພ້ອມຂອງເຄຣດິດທີ່ພຽງພໍ ແລະ ທາງທະນາຄານອາດຍອມຮັບເອົາເປັນຄັ້ງຄາວຕາມຄວາມເໝາະສົມ ຕາມວິທີການດັ່ງຕໍ່ໄປນີ້:

4.1 ທ່ານສາມາດຮ້ອງຂໍການເບີກເງິນສົດລ່ວງໜ້າໄດ້ ໂດຍໃຊ້ບັດເຄຣດິດຂອງທ່ານທີ່ສະຖາບັນການເງິນອື່ນໆທີ່ມີໂລໂກວີຊາຂອງສະມາຄົມບັດ ແລະ ເອທີເອັມວີຊາໃດກໍ່ໄດ້

### ວົງເງິນສູງສຸດສຳລັບການເບີກເງິນສົດລ່ວງໜ້າ

4.2 ການເບີກເງິນສົດລ່ວງໜ້າສາມາດໃຊ້ໄດ້ບໍ່ເກີນ 50% ຂອງວົງເງິນພາຍໃນປະເທດ ແລະ 80% ຂອງວົງເງິນລະຫວ່າງປະເທດ

## 5. ໂອນຍອດທີ່ຍັງເຫຼືອ

5.1 ຫາກມີການຮ້ອງຂໍ, ພວກເຮົາອາດອະນຸມັດໃຫ້ມີການໂອນຍອດທີ່ຍັງເຫຼືອພາຍໃຕ້ເງື່ອນໄຂໃດໆທີ່ພວກເຮົາແນະນຳໃຫ້

5.2 ທ່ານສາມາດດຳເນີນການຊຳລະເງິນທີ່ຈຳເປັນໄປຍັງບັນຊີທີ່ທ່ານໂອນຍອດຄົງເຫຼືອ ຈົນກວ່າພວກເຮົາຈະຢືນຢັນວ່າບັນຊີນັ້ນໄດ້ຮັບເຄຣດິດແລ້ວ. ພວກເຮົາຈະບໍ່ຮັບຜິດຊອບຕໍ່ການຊຳລະເງິນທີ່ຄ້າງຊຳລະ ຫຼື ດອກເບ້ຍທີ່ເກີດຂຶ້ນກ່ຽວກັບບັນຊີທີ່ທ່ານໂອນຍອດຄົງເຫຼືອ

5.3 ການຊຳລະເງິນໃດໆໃນບັນຊີຂອງທ່ານສຳລັບບັດເຄຣດິດ ແມ່ນຈະຖືກນຳໃຊ້ເພື່ອຫຼຸດຍອດຄົງເຫຼືອກ່ອນຍອດຄົງເຫຼືອອື່ນໆທີ່ເປັນໜີ້

## 6. ດອກເບ້ຍ, ຄ່າທຳນຽມ ແລະ ຄ່າບໍລິການ

6.1 ດອກເບ້ຍ ຄ່າທຳນຽມ ແລະ ຄ່າບໍລິການ (ລວມທັງຄ່າໃຊ້ຈ່າຍທາງການເງິນ, ຄ່າທຳນຽມການເບີກເງິນສົດລ່ວງໜ້າ, ຄ່າທຳນຽມການຊຳລະທີ່ລ່າຊ້າ, ຄ່າທຳນຽມລາຍປີ ແລະ ຄ່າທຳນຽມບໍລິຫານຈັດການ) ແມ່ນລະບຸໄວ້ໃນຄູ່ມືບໍລິການ ແລະ ລາຄາ

6.2 ເວັ້ນແຕ່ຈະລະບຸໄວ້ເປັນຢ່າງອື່ນ, ດອກເບ້ຍຈະຖືກຄຳນວນຕາມປີ 360ວັນ ແລະ ຄິດເປັນລາຍວັນ ຫຼື ຕາມຂໍ້ກຳນົດອື່ນໆທີ່ພວກເຮົາເລືອກ

6.3 ດອກເບ້ຍຈະຖືກຄິດໄລ່ຈົນຮອດວັນທີ່ມີການຊຳລະຍອດທີ່ຄ້າງຊຳລະເຕັມຈຳນວນ

6.4 ທ່ານຕ້ອງໃຊ້ຄ່າໃຊ້ຈ່າຍທັງໝົດເປັນຄ່າທຳນຽມການຕິດຕາມໜີ້ ທີ່ພວກເຮົາຕ້ອງຈ່າຍກ່ຽວກັບບັດເຄຣດິດເມື່ອມີການທວງຖາມ

## 7. ຄວາມຮັບຜິດຊອບ

### ໂດຍທົ່ວໄປ

7.1 ທ້ານຕ້ອງຮັບຜິດຊອບຕໍ່:

> ຄວາມຜິດພາດຂອງຜູ້ຖືບັດ ໃນການປະຕິບັດຕາມເງື່ອນໄຂພາຍໃຕ້ຂໍ້ຕົກລົງທີ່ທາງທະນາຄານວາງອອກ

> ທຸລະກຳທັງໝົດທີ່ນຳໃຊ້ບັດເຄຣດິດ (ຍົກເວັ້ນທຸລະກຳທີ່ມີການໂຕ້ແຍ້ງ)

> ຍອດເງິນທີ່ເປັນໜີ້ ສຳລັບບັນຊີຂອງບັດເຄຣດິດ (ລວມເຖິງຈຳນວນເງິນທີ່ຖືກຫັກ ແລະ ໂອນເຂົ້າບັນຊີສຳລັບບັດເຄຣດິດໂດຍຜູ້ ຖືບັດເສີມ ແລະ

> ທຸລະກຳໃດໆທີ່ພວກເຮົາສາມາດໃຊ້ສິດໃນການປະຕິເສດການຊຳລະເງິນ, ຫາກທ່ານບໍ່ໄດ້ແຈ້ງໃຫ້ພວກເຮົາຮັບຊາບກ່ຽວກັບທຸລະກຳ ແລະ ຈັດຫາເອກະສານຫຼືຂໍ້ມູນເພີ່ມເຕີມໃດໆທີ່ພວກເຮົາຕ້ອງການພາຍໃນໄລຍະເວລາທີ່ກຳນົດໄວ້

### ຂໍ້ໂຕ້ແຍ້ງລະຫວ່າງທ່ານ ແລະ ຜູ້ຖືບັດເສີມ

7.2 ສິດ ແລະ ໜ້າທີ່ຂອງພວກເຮົາທີ່ກ່ຽວຂ້ອງກັບທ່ານ ແລະ ຜູ້ຖືບັດເສີມແຕ່ລະລາຍ ຈະຕ້ອງບໍ່ໄດ້ຮັບຜົນກະທົບຈາກຂໍ້ໂຕ້ແຍ້ງ ຫຼື ຂໍ້ຮຽກຮ້ອງໃດໆທີ່ທ່ານ ແລະ ຜູ້ຖືບັດເສີມອາດມີຕໍ່ກັນ

### ການຊື້ສິນຄ້າ ຫຼື ບໍລິການ

7.3 ພວກເຮົາຈະບໍ່ຮັບຜິດຊອບຕໍ່:

> ເງື່ອນໄຂການຊຳລະເງິນ ໂດຍການຜ່ອນຊຳລະ ຫຼື ອື່ນໆໃນບັນຊີຂອງບັດເຄຣດິດ ຫຼື ການຈັດການໃນການຊຳລະເງິນອື່ນໃດທີ່ລວມເຖິງບຸກຄົນທີສາມຂອງທ່ານດ້ວຍບັດເຄຣດິດ

> ການປະຕິເສດຈາກຜູ້ຄ້າ, ສະຖາບັນການເງິນ ຫຼື ບຸກຄົນອື່ນທີ່ຈະຮັບບັດເຄຣດິດ ແລະ

> ຂໍ້ບົກຜ່ອງ ຫຼື ຄວາມຜິດພາດໃນສິນຄ້າ ຫຼື ບໍລິການທີ່ຜູ້ຄ້າ, ສະຖາບັນການເງິນ ຫຼື ບຸກຄົນອື່ນຈັດຫາໃຫ້ ທ່ານ

ທ່ານຈະຕ້ອງແກ້ໄຂຂໍ້ຮຽກຮ້ອງໃດໆ ຕໍ່ຜູ້ຄ້າ, ສະຖາບັນການເງິນຫລືບຸກຄົນອື່ນໆ ໂດຍບໍ່ມີ ສ່ວນກ່ຽວຂ້ອງໃດໆຈາກພວກເຮົາ ແລະ ບໍ່ມີຂໍ້ຮຽກຮ້ອງໃດໆຈາກພວກເຂົາຕໍ່ພວກເຮົາ.

### ບໍລິການເພີ່ມເຕີມຈາກບັດເຄຼດິດ

7.4 ບັດເຄຣດິດບາງປະເພດຊ່ວຍໃຫ້ທ່ານສາມາດເຂົ້າເຖິງບໍລິການທີ່ຈັດຫາ ແລະ ຊຳລະເງິນໂດຍບຸກຄົນທີສາມ. ທ່ານຕ້ອງຮັບຜິດຊອບຄ່າໃຊ້ຈ່າຍທາງການແພດ, ກົດໝາຍ ຫຼື ບໍລິການອື່ນໆທີ່ຈັດຫາໃຫ້ພາຍໃຕ້ບໍລິການຂອງບຸກຄົນທີສາມເຫຼົ່ານີ້. ທ່ານຕ້ອງຍອມຮັບວ່າ ຜູ້ໃຫ້ບໍລິການບຸກຄົນທີສາມໄດ້ມີຄວາມພະຍາຍາມຢ່າງເຕັມທີ່ໃນການໃຫ້ບໍລິການແກ່ຜູ້ຖືບັດ ແລະ ການບໍລິການອາດບໍ່ສາມາດໃຊ້ໄດ້ຕະຫຼອດເວລາ (ເຊັ່ນ:ເນື່ອງຈາກເວລາ,ໄລຍະທາງ ຫຼື ສະຖານທີ່). ທັງພວກເຮົາ ແລະ ຜູ້ໃຫ້ບໍລິການບຸກຄົນທີສາມ ຫຼື ສະມາຄົມບໍລິການວີຊາລະຫວ່າງປະເທດ ແມ່ນຕ້ອງບໍ່ໄດ້ຮັບຜິດຊອບຕໍ່ທ່ານສຳລັບການສູນເສຍໃດໆທີ່ກ່ຽວຂ້ອງກັບບໍລິການໃດໆ ຫຼື ບໍ່ສາມາດນຳໃຊ້ໄດ້

7.5 ນອກຈາກນີ້ ພວກເຮົາຍັງບໍ່ຮັບຜິດຊອບຕໍ່ຜູ້ຖືບັດເຄຣດິດທີ່ສາມາດເຂົ້າເຖິງການຖອນເງິນສົດສຸກເສີນ (ຫາກມີ) ສຳລັບການເສຍຫາຍໃດໆທີ່ພວກເຂົາມີ, ຫາກພວກເຮົາບໍ່ສາມາດຕອບສະໜອງຜົນທັນທີກັບການຖອນເງິນສົດສຸກເສີນ, ບັດທົດແທນ ຫຼື ສິ່ງອຳນວຍຄວາມສະດວກອື່ນໃດທີ່ພວກເຮົານຳສະເໜີໃນການເຊື່ອມຕໍ່ກັບບັດເຄຣດິດ. ຂໍ້ກຳນົດຂອງລູກຄ້າ ລວມເຖິງຂໍ້ກຳນົດເພີ່ມຕື່ມກ່ຽວກັບຄວາມຮັບຜິດຊອບຂອງທ່ານທີ່ມີຕໍ່ພວກເຮົາ ແລະ ການຍົກເວັ້ນ ຫຼື ຂໍ້ຈຳກັດຄວາມຮັບຜິດຊອບຂອງພວກເຮົາ. ໃຫ້ເບິ່ງຕາມຕົວຢ່າງເຊັ່ນ "ທ່ານຊົດໃຊ້ໃຫ້ພວກເຮົາ". ແລະ " ການຍົກເວັ້ນຄວາມຮັບຜິດຊອບ"

## 8. ການບໍລິການເພີ່ມຕື່ມ

8.1 ພວກເຮົາອາດສະເໜີບໍລິການເພີ່ມຕື່ມສຳລັບບັນຊີຂອງທ່ານ. ສິ່ງເຫຼົ່ານີ້ອາດລວມເຖິງໂປແກຣມການແຈກລາງວັນ, ແຜນການໂອນຍອດຊຳລະ, ປ້ອງກັນບັດ ແລະ ບໍລິການອື່ນໆ ເຊິ່ງທ່ານສາມາດຄົ້ນຫາຂໍ້ມູນເພີ່ມຕື່ມໄດ້ໂດຍຕິດຕໍ່ພວກເຮົາຜ່ານທາງສາຂາ ຫຼື ໜ່ວຍບໍລິການຂອງພວກເຮົາ ຫຼື ຈາກການບໍລິການຜ່ານທາງໂມບາຍແບັງຄິ້ງ ຫຼື ຕາມການແນະນຳທີ່ຈະແຈ້ງໃຫ້ທ່ານຮັບຊາບເປັນໄລຍະ

8.2 ຫາກທ່ານສະໝັກໃຊ້ບໍລິການເພີ່ມຕື່ມ ສະແດງວ່າທ່ານມີຂໍ້ຜູກພັນຕາມເງື່ອນໄຂຂອງບໍລິການເພີ່ມຕື່ມ. ໃນຂອບເຂດຂອງຄວາມບໍ່ສອດຄ່ອງກັນລະຫວ່າງຂໍ້ກຳນົດຂອງບໍລິການເພີ່ມຕື່ມ ແລະ ຂໍ້ຕົກລົງທາງທະນາຄານຂອງພວກເຮົາ, ຂໍ້ຕົກລົງທາງທະນາຄານຂອງພວກເຮົາຈະມີຜົນບັງຄັບໃຊ້ ເວັ້ນເສຍແຕ່ຂໍ້ກຳນົດຂອງບໍລິການເພີ່ມຕື່ມຈະລະບຸໄວ້ເປັນຢ່າງອື່ນ

## 9. ການຊຳລະ

### ການຊຳລະເງິນຕາມວັນທີຄົບກຳນົດ

9.1 ພາຍໃນ ຫຼື ກ່ອນວັນຄົບກຳນົດທີ່ລະບຸໄວ້ໃນໃບແຈ້ງຍອດທີ່ພວກເຮົາອອກໃຫ້ສຳລັບບັດເຄຣດິດຂອງທ່ານ, ທ່ານຕ້ອງຊຳລະເງິນຂັ້ນຕ່ຳທີ່ເຖິງກຳນົດຊຳລະເປັນຢ່າງໜ້ອຍ ຕາມທີ່ບະບຸໄວ້ໃນໃບແຈ້ງຍອດ

9.2 ຄວາມຮັບຜິດຊອບຂອງທ່ານຕໍ່ພວກເຮົາຍັງຄົງຢູ່ ເຖິງວ່າທ່ານຈະບໍ່ໄດ້ຮັບໃບແຈ້ງຍອດເປັນງວດ ບໍ່ວ່າດ້ວຍເຫດຜົນໃດກໍ່ຕາມ

9.3 ຫາກຈຳນວນເງິນເຖິງກຳນົດຊຳລະ ໃນວັນທີທີ່ບໍ່ແມ່ນວັນລັດຖະການຂອງທະນາຄານ ທ່ານຈະຕ້ອງຊຳລະໃນວັນລັດຖະສການຖັດໄປ

### ການຄຳນວນການຊຳລະເງິນຂັ້ນຕ່ຳ

9.4 ພວກເຮົາຄຳນວນການຊຳລະເງິນຂັ້ນຕ່ຳ ຕາມແນວທາງປະຕິບັດປົກກະຕິຂອງພວກເຮົາ ໃຫ້ເບິ່ງຕາມສະເຕດເມັ້ນຂອງທ່ານ ຫຼື ຕິດຕໍ່ພວກເຮົາເພື່ອຂໍຂໍ້ມູນເພີ່ມຕື່ມ

### ສະກຸນເງິນຂອງທຸລະກຳ

9.5 ຫາກທຸລະກຳໃດໆທີ່ກະທຳໂດຍໃຊ້ບັດເຄຣດິດ ບໍ່ໄດ້ກຳນົດເປັນສະກຸນເງິນ USD ພວກເຮົາຈະປ່ຽນຈຳນວນທຸລະກຳມາເປັນສະກຸນເງິນ USD ຕາມແນວທາງປະຕິບັດຕາມປົກກະຕິ ແລະ ຂໍ້ຕົກລົງທາງທະນາຄານຂອງພວກເຮົາ

### ວິທີທີ່ພວກເຮົາຊຳລະເງິນ

9.6 ພວກເຮົາອາດ (ແຕ່ບໍ່ຈຳເປັນຕ້ອງ) ໃຊ້ການຊຳລະເງິນທີ່ເຮົາໄດ້ຮັບເພື່ອຈ່າຍ:
> ຄ່າທຳນຽມ, ຄ່າບໍລິການ, ການເບີກເງິນສົດ, ດອກເບ້ຍ ແລະ ຄ່າໃຊ້ຈ່າຍອື່ນໆທີ່ສະແດງໃນໃບແຈ້ງຍອດກ່ອນໜ້ານັ້ນ
> ຄ່າທຳນຽມ, ຄ່າບໍລິການ, ການເບີກເງິນສົດ, ດອກເບ້ຍ ແລະ ດອກເບ້ຍຄ່າບໍລິການອື່ນໆທີ່ສະແດງໃນໃບແຈ້ງຍອດປະຈຸບັນ
> ທຸລະກຳທີ່ຍັງບໍ່ໄດ້ມີການຊຳລະໃດໆທີ່ສະແດງຢູ່ໃນໃບແຈ້ງຍອດກ່ອນໜ້ານັ້ນ
> ທຸລະກຳທີ່ຍັງບໍ່ໄດ້ຊຳລະໃດໆທີ່ສະແດງໃນໃບແຈ້ງຍອດປະຈຸບັນ
> ຄ່າທຳນຽມ, ຄ່າບໍລິການ, ການເບີກເງິນສົດ, ດອກເບ້ຍຄ່າໃຊ້ຈ່າຍອື່ນໆ ແລະ ການເຮັດທຸລະກຳອື່ນໆໃນບັນຊີທີ່ບໍ່ສະແດງໃນໃບແຈ້ງຍອດປະຈຸບັນ.

### ຈະເກີດຫຍັງຂຶ້ນຫາກທ່ານບໍ່ຊຳລະເງິນ

9.7 ຫາກພວກເຮົາບໍ່ໄດ້ຮັບຍອດເງິນທີ່ຄ້າງຊຳລະໃນບັນຊີສຳລັບບັດເຄຣດິດ ພາຍໃນ ຫຼື ກ່ອນວັນທີຄົບກຳນົດ ພວກເຮົາອາດຮຽກເກັບເງິນ ແລະ ຫັກຕົວເລກຈາກບັນຊີສຳລັບຄ່າໃຊ້ຈ່າຍທາງການເງິນ ດ້ວຍບັດເຄຣດິດ ຕາມທີ່ລະບຸໄວ້ໃນຄູ່ມືບໍລິການ ແລະ ລາຄາ ຫຼື ບ່ອນອື່ນໆໃນທະນາຄານຂອງພວກເຮົາ

9.8 ຫາກພວກເຮົາບໍ່ໄດ້ຮັບການຊຳລະເງິນຂັ້ນຕ່ຳ ພາຍໃນ ຫຼື ກ່ອນວັນທີຄົບກຳນົດຊຳລະ:
> ທ່ານຕ້ອງຊຳລະຄ່າທຳນຽມການຊຳລະລ່າຊ້າຕາມທີ່ບະບຸໄວ້ໃນຄູ່ມືບໍລິການ ແລະ ລາຄາ ຫຼື ບ່ອນອື່ນໆໃນຂໍ້ຕົກລົງຂອງທະນາຄານພວກເຮົາ
> ທ່ານຕ້ອງບໍ່ສາມາດນຳໃຊ້ບັດເຄຣດິດ ຈົນກ່ວາຈະມີການຊຳລະເງິນຂັ້ນຕ່ຳ
> ພວກເຮົາຈະທຳການລະງັບການໃຊ້ບັດເຄຣດິດຂອງທ່ານ.

### ການຊຳລະເງິນເຕັມຈຳນວນຫາກມີການຮ້ອງຂໍຈາກພວກເຮົາ

9.9 ເຖິງແມ່ນວ່າຈະເປັນເງື່ອນໄຂອື່ນໆໃນຂໍ້ຕົກລົງທາງທະນາຄານຂອງພວກເຮົາກໍ່ຕາມ ແຕ່ເມື່ອໃດກໍ່ຕາມຫາກພວກເຮົາສາມາດຮຽກຮ້ອງເພື່ອໃຫ້ຊຳລະເງິນທັນທີຂອງຍອດເງິນທັງໝົດທີ່ເປັນໜີ້ສຳລັບບັນຊີບັດເຄຣດິດ ພ້ອມດອກເບ້ຍ ແລະ ຄ່າທຳນຽມ

### ການຄືນເງິນເຂົ້າບັນຊີບັດເຄຣດິດ

9.10 ພວກເຮົາໃຫ້ເຄຣດິດເງິນຄືນເຂົ້າບັນຊີສຳລັບບັດເຄຣດິດ ທີ່ກ່ຽວຂ້ອງກັບ:
> ທຸລະກຳທີ່ນຳໃຊ້ບັດເຄຣດິດ ຫຼື
> ການຊຳລະເງິນເຂົ້າບັນຊີສຳລັບບັດເຄຣດິດ ຫຼື
> ເຄຣດິດອື່ນໆທີ່ເປັນຂອງທ່ານ ເມື່ອພວກເຮົາໄດ້ຮັບຈຳນວນເງິນທີ່ຈະໂອນເປັນ USD ແລະ ເປັນໄປຕາມແນວທາງປະຕິບັດປົກກະຕິຂອງພວກເຮົາ.

### ສະເຕດເມັ້ນ

9.11 ຫາກທ່ານຄິດວ່າ ມີຂໍ້ຜິດພາດໃນໃບແຈ້ງຍອດຂອງທ່ານ, ທ່ານຕ້ອງແຈ້ງໃຫ້ພວກເຮົາຮັບຊາບເປັນລາຍລັກອັກສອນ ພ້ອມທັງລາຍລະອຽດຂອງຂໍ້ຜິດພາດພາຍໃນ 30ວັນ ຫຼັງຈາກວັນທີໃນໃບແຈ້ງຍອດ, ຫາກບໍ່ມີການປະຕິບັດດັ່ງກ່າວນັ້ນ ພວກເຮົາຈະຖືວ່າຂໍ້ຄວາມນັ້ນແມ່ນຖືກຕ້ອງ

## 10. ການຍົກເລີກ ແລະ ຢຸດຕິການນຳໃຊ້

### ວິທີການຢຸດຕິການນຳໃຊ້

10.1 ເມື່ອໃດກໍ່ຕາມສຳລັບຢຸດຕິການນຳໃຊ້ ທ່ານສາມາດເລືອກໄດ້ດັ່ງນີ້:
> ການຍົກເລີກ ຫຼື ລະງັບການສິດໃນການໃຊ້ບັດເຄຣດິດ/ເດບິດຂອງທ່ານ ຫຼື ຢຸດຕິບັນຊີສຳລັບບັດບັດເຄຣດິດ/ເດບິດ
> ການປະຕິເສດການອະນຸມັດດຳເນີນທຸລະກຳຕ່າງໆໃດໜຶ່ງທີ່ທ່ານຕ້ອງການນຳໃຊ້ສຳລັບບັດເຄຣດິດດັ່ງກ່າວ
> ການປະຕິເສດອອກບັດຄືນໃໝ່, ຕໍ່ອາຍຸນຳໃຊ້ ຫຼື ປ່ຽນບັດໃໝ່ ໂດຍບໍ່ຕ້ອງແຈ້ງໃຫ້ທ່ານຮັບຊາບ ຫຼື ດ້ວຍເຫດຜົນໃດໆ.

10.2 ເມື່ອໃດກໍ່ຕາມຫາກທ່ານຈະຢຸດຕິບັນຊີສຳລັບບັດເຄຣດິດ/ເດບິດ ແມ່ນຕ້ອງແຈ້ງໃຫ້ທະນາຄານຮັບຊາບເປັນລາຍລັກອັກສອນ

### ສິ່ງເຫຼົ່ານີ້ຈະເກີດຂຶ້ນ ເມື່ອບັນຊີຖືກຢຸດຕິການນຳໃຊ້

10.3 ເມື່ອທ່ານຢຸດຕິ/ຍົກເລີກບັນຊີສຳລັບການນຳໃຊ້ບັດເຄຣດິດ, ທ່ານຕ້ອງປະຕິບັດດັ່ງນີ້:
> ຕັດທຳລາຍບັດເຄຣດິດດັ່ງກ່າວອອກເປັນສອງສ່ວນ, ຕາມດ້ວຍ
> ຊຳລະຍອດໜີ້ຄົງເຫຼືອໃນບັນຊີບັດເຄຣດິດ ທັນທີ,
ລວມເຖິງຈຳນວນເງິນອື່ນໆທີ່ກ່ຽວຂ້ອງກັບທຸລະກຳຂອງບັດເຄຣດິດທີ່ເກີດຂຶ້ນ
ທີ່ຍັງບໍ່ໄດ້ລວມເຂົ້າບັນຊີກ່ອນການຢຸດຕິນຳໃຊ້ບັດດັ່ງກາວ.

### ການຍົກເລີກການນຳໃຊ້ບັດເຄຣດິດເສີມ ໂດຍເຈົ້າຂອງບັດ

10.4 ເຈົ້າຂອງບັດ ຫຼື ຜູ້ນຳໃຊ້ບັດເສີມ ສາມາດຍົກເລີກການນຳໃຊ້ບັດເຄຣດິດເສີມໄດ້ດັ່ງນີ້:
> ແຈ້ງໃຫ້ທະນາຄານຮັບຊາບເປັນລາຍລັກອັກສອນ
> ຕັດທຳລາຍບັດອອກເປັນສອງສ່ວນ.

## 11. ການປັບປ່ຽນ

11.1 ຫາກທ່ານບໍ່ສະດວກໃຈກັບການປ່ຽນແປງໃດໆພາຍໃຕ້ຂໍ້ຕົກລົງຂອງທະນາຄານ, ທ່ານສາມາດຍົກເລີກບັນຊີສຳລັບບັດເຄຣດິດໄດ້ຕາມຂັ້ນຕອນໃນຂໍ້ທີ10

11.2 ຫາກທະນາຄານພວກເຮົາແຈ້ງການໃຫ້ທ່ານຊາບກ່ຽວກັບການປ່ຽນແປງຂໍ້ຕົກລົງທາງທະນາຄານໃດໆຕາມກົດໝາຍບັງຄັບໃຊ້ ແລະ ທ່ານຍັງຄົງນຳໃຊ້ບັດເຄຣດິດ, ບັນຊີບັດເຄຣດິດ ຫຼື ເລກລະຫັດ/ລະຫັດຜ່ານຈະຖືກວ່າທ່ານເຫັນດີຍອມຮັບຕາມການປ່ຽນແປງ

## 12. ທຸລະກຳທີ່ບໍ່ໜ້າເຊື່ອຖື

ພວກເຮົາຈະບໍ່ໃຫ້ຄວາມເຊື່ອຖືຕໍ່ກັບທຸລະກຳທີ່ບໍ່ໜ້າເຊື່ອຖືໄດ້

## 13. ຄວາມໝາຍຂອງຄຳສັບ

ທ່ານຖືກອ້າງອີງຕາມຂໍ້ກຳນົດສຳລັບລູກຄ້າ ຕາມການລະບຸຄວາມໝາຍຂອງຄຳສັບທີ່ຖືກໃຊ້ໃນຂໍ້ກຳນົດເຫຼົ່ານີ້ດ້ວຍ, ຫາກຄຳສັບເຫຼົ່ານີ້ຖືກໃຊ້ໃນຂໍ້ກຳນົດຂອງລູກຄ້າ ໃນຮູບແບບຄຳຈຳກັດຄວາມແມ່ນຈະນຳໃຊ້ເພື່ອວັດຖຸປະສົງຂອງບັນຊີສຳຫຼັບບັດເຄຣດິດ.

ການໂອນຍອດເງິນຄົງເຫຼືອ ໝາຍເຖິງການທຸລະກຳທີ່ພວກເຮົາຫັກເງິນຕາມຈຳນວນທີ່ໄດ້ລະບຸໄວ້ໃນບັດເຄຣດິດຂອງທ່ານ ແລະ ຊຳລະໃຫ້ບັດເຄຣດິດອື່ນໆຂອງທະນາຄານ ຫຼື ສະຖາບັນການເງິນອື່ນໆ.

ການເບີກເງິນສົດລ່ວງໜ້າໝາຍເຖິງການອອກເງິນສົດທີ່ອອກເປັນສະກຸນເງິນໃດໜຶ່ງທີ່ທ່ານໄດ້ຮັບຈາກບັດເຄຣດິດ.

ວົງເງິນເຄຣດິດ ໝາຍເຖິງຈຳນວນເງິນສູງສຸດທີ່ທ່ານມີສິດນຳໃຊ້ຈາກບັນຊີບັດເຄຣດິດ.

ຂໍ້ຕົກລົງທະນາຄານໝາຍເຖິງ ຂໍ້ຕົກລົງລະຫວ່າງທ່ານ ແລະ ທະນາຄານຂອງພວກເຮົາ ເຊິ່ງເກີດຂຶ້ນເມື່ອພວກເຮົາຍອມຮັບໃນໃບສະໝັກບັດເຄຣດິດທີ່ປະກອບດ້ວຍເງື່ອນໄຂ ແລະ ຂໍ້ກຳນົດນຳໃຊ້ບັດເຄຣດິດ.

ບັດເສີມໝາຍເຖິງບັດເຄຣດິດທີ່ອອກໃຫ້ກັບຜູ້ຖືບັດເສີມໂດຍໄດ້ຮັບການຍິນຍອມເຫັນດີຈາກເຈົ້າຂອງບັດ.

ຜູ້ຖືບັດເສີມໝາຍເຖິງບຸກຄົນອື່ນໆທີ່ພວກເຮົາໄດ້ອອກບັດເສີມໃຫ້ຮັບຊາບຍິນຍອມ.

ພວກເຮົາ/ຂ້າພະເຈົ້າເຫັນດີຕາມຂໍ້ຕົກລົງ ແລະ ເງື່ອນໄຂຂ້າງເທິງ

ຊື່ນາມສະກຸນ : ..............................

ຫົວຂໍ້ : ..............................

ລາຍເຊັນ : ..............................

ວັນທີ : ..............................

ເຄື່ອງໝາຍບໍລິສັດ : ..............................
(ຖ້າຈຳເປັນ)

# Credit Card Terms & Conditions

## Contents

1. Choosing the product that is right for you
2. The Credit cards
3. Credit limit
4. Cash advance
5. Balance transfer
6. Interest, fees and charges
7. Liability
8. Additional services for your account
9 Payments
10. Cancellation and termination
11. Variation
12. Suspicious transactions
13. Meaning of words

## Important notice

### You need to read this document and accept the terms and conditions hereto.

It sets out specific terms and conditions on which we agree to provide you with credit card products. You must read it in conjunction with our Customer Terms, the product brochure and any other documents forming our banking agreement. To the extent of any inconsistency between the terms set hereunder and our Customer Terms, these terms prevail.

## Definitions

Defined Words printed in italics and defined words used in our banking agreement shallhave the meaning ascribed to them in our Customer Terms unless otherwise defined herein. Some additional defined words which apply to the products referred to in these terms and conditions hereunder shall have the same meaning ascribed to them at the end of this document.

## 1. Choosing the product that is right for you

We offer a variety of credit card products designed to suit your personal banking needs which you have discussed with us. The particular types of credit cards we offer are set out in the product brochures. If you need us to explain any of the features of, or the terms applying to, any credit cards, please contact us and we will be happy to give you all the information that you may need.

## 2. The credit cards

### Issue of credit cards

2.1 We may issue a credit card to you and, if you ask, to each supplementary cardholder.

### Collection

2.2 You will be collecting the credit card personally from the bank upon receiving either a phone call, SMS or email requesting you to collect your credit card.

### Activation procedures

2.3 Each cardholder must comply with any activation procedures notified from time to time.

### Using the credit card

2.4 The terms of our banking agreement apply to each use of a credit card. If a cardholder does not agree with those terms, they should not sign the credit card or carry out any transaction.

2.5 You accept the terms of our banking agreement when you first use the credit card.

2.6 You must ensure that only you are using the credit card. Any supplement cards issued for other eligible persons shall be used at your sole liability and will be deemed, if used by such persons, as if used by you personally.

### Supplementary cards

2.7 We send any supplementary cards, their PINs/password and all communications relating to them to you.

2.8 Any communication we give to you on any supplementary cardholder shall be delivered to you.

2.9 You shall procure that each supplementary cardholder agree to be bound by the instructions that any of you give us.

### Types or co-brand cards

2.10 We may convert your current card type to another type of credit card at our discretion.

2.11 We are not liable for any representations, promotions or obligations made by a business alliance partner.

## 3. Credit limit

3.1 The standard credit limit assignment is 95% of the amount of Fixed Deposit(s) which is/are used as collateral for the credit card. The Bank may vary the credit limit at any time.

3.2 The credit limit is an overall limit that applies to all credit cards issued to you.

3.3 The credit limit is also dependant on the prevailing local regulations.

### Increasing credit limit

3.4 Every request to increase credit limit should be in written via filling in the Request for Credit Limit form.

## 4. Cash advance

### How to obtain a cash advance

The Cardholder may obtain Cash Advance subject to availability of adequate credit and as may be acceptable to the Bank from time to time at it's absolute discretion by the following means:

4.1 You may obtain a cash advance using your credit card at one other financial institutions displaying Visa® logo of a card association and any Visa® ATM.

### Maximum limit on cash advance

4.2 A cash advance is only available up to 50% of the limit for domestic and 80% of the limit for international.

## 5. Balance transfer

5.1 If you ask, we may permit a balance transfer subject to any conditions we specify.

5.2 You should continue to make any required payments to the account from which you transfer a balance until we confirm that the account has been credited. We are not liable for any overdue payment or interest incurred relating to the account from which you transfer a balance.

5.3 Any payment made on your account for the credit card will first be applied to reduce the balance transfer before any other balance owing.

## 6. Interest, fees and charges

6.1 Interest, fees and charges (including finance charges, cash advance fees, late payment fees, annual fees and administrative fees) are set out in the Service & Price Guide.

6.2 Unless otherwise specified, interest is calculated on the basis of a 360 day year and compounded on daily basis or such other basis we choose.

6.3 Interest is charged until the date the balance owing is paid in full.

6.4 You must pay all costs such as debt collection fees we incur in connection with the credit card on demand.

## 7. Liability

### General

7.1 You are liable for:
> any failure by any cardholder to comply with the terms of our banking agreement;
> all transactions made using a credit card (except for disputed transactions);
> the balance owing for the account for a credit card (including all amounts debited and credited to the account for the credit card by any supplementary cardholder); and
> any transactions where we could otherwise have exercised chargeback rights if you do not notify us of the transactions and provide any further documents or information we require within the time periods required.

### Disputes between you and supplementary cardholders

7.2 Our rights and obligations relating to you and each supplementary cardholder are not affected by any dispute or claim you and the supplementary cardholder may have against each other.

### Purchase of goods or services

7.3 We are not liable for:
> Any payment terms by instalments or otherwise on the account of the credit card or any other payment arrangement you conclude with third parties with the credit card;
> the refusal of any merchant, financial institution or other person to accept the credit card; and
> any defect or deficiency in goods or services supplied to you by any merchant, financial institution or other person.

You must solely resolve any complaint against any merchant, financial institution or other person without any involvement from us and no claim against any of them may be set off against us.

### Additional services offered with credit cards

7.4 Some types of credit cards give you access to services provided and paid for by third parties. You are liable for the cost of any medical, legal or other services provided under these third party services. You acknowledge that the third party service providers do their best to provide the services to cardholders and that the services may not always be available (for example, because of time, distance or location). Neither we nor the third party service provider or Visa International Service Association is liable to you for any loss in connection with any service or its unavailability

7.5 We are also not liable to holders of a credit card with access to Emergency Cash Withdrawal (if available) for any loss they suffer if we are unable to give immediate effect to an Emergency Cash Withdrawal, replacement card or any other facilities we offer in connection with the credit card.

The Customer Terms include additional provisions relating to your liability to us and exclusions or limits on our liability. See, for example, "You indemnify us" and "Exclusion of liability".

## 8. Additional services for your account

8.1 We may offer additional services for your account. These may include reward programmes, balance transfer schemes, payment arrangements, card protection and any other services which you can find out more about by contacting us at one of our branches or service units or by using mobile banking or as we advise you from time to time.

8.2 If you sign up for additional services, you are bound by the terms of the additional services. To the extent of any inconsistency between the terms of the additional services and our banking agreement, our banking agreement prevails unless the terms of the additional services specify otherwise.

## 9. Payments

### Payment by due date

9.1 On or before the due date set out in the statement we issue for your credit card, you must pay at least the minimum payment due as set out in the statement.

9.2 Your liability to us remains even if, for any reason, you do not receive your periodic statement.

9.3 If an amount is due on a day which is not a banking day, you must pay it on the next banking day.

### Calculation of minimum payment

9.4 We calculate the minimum payment in accordance with our usual practice. Please refer to your statement or contact us for further information.

### Currency of transactions

9.5 If any transaction made using the credit card is not denominated in the currency of USD, we convert the amount of the transaction to the currency of USD in accordance with our usual practice and our banking agreement.

### How we apply payments

9.6 We may (but need not) apply payments we receive to pay:
> fees, charges, cash advances, interest and other charges shown on the previous statement; then
> fees, charges, cash advances, interest and other charges interest shown on the current statement; then
> any unpaid transactions shown on the previous statement; then
> any unpaid transactions shown on the current statement; then
> fees, charges, cash advances, interest, other charges and other transactions on the account not shown on the current statement.

### What happens if you do not pay

9.7 If we do not receive the balance owing for the account for a credit card on or before the due date we may charge and debit from the account for a credit card finance charges as set out in the Service & Price Guide or elsewhere in our banking agreement.

9.8 If we do not receive the minimum payment on or before the due date, then:
> you must pay a late payment fee as set out in the Service & Price Guide or elsewhere in our banking agreement;
> you must not use the credit card until the minimum payment has been paid;
> we may suspend the your use of the credit card.

### Payment in full if we ask

9.9 Despite any other term of our banking agreement, at any time we may demand immediate payment of the total amount of the balance owing for the account for a credit card plus interest and fees.

### Refunds to the credit card account

9.10 We only credit a refund to the account for a credit card in connection with:
> a transaction made with the credit card; or
> a payment to the account for the credit card; or
> any other credit owing to you, when we receive the amount to be credited in USD and in accordance with our usual practice.

### Statement

9.11 If you think there is an error on your statement you must notify us in writing with details of the error within 30 days after the date of the statement. If you do not do so, we treat the statement as correct.

## 10. Cancellation and termination

### How to terminate

10.1 At any time we may choose to:
> cancel or suspend your right to use the credit card or end the account for a credit card;
> refuse to authorise any transaction for which you want to use the credit card; and
> refuse to re-issue, renew or replace the credit card, without giving you any notice or reason.

10.2 At any time, you may end the account for a credit card by notifying us in writing.

### What happens if the account is terminated

10.3 If you or we end the account for a credit card, you must:
> cut the credit card in half; and
> immediately pay the balance owing for the account for the credit card together with any other amounts owing in connection with credit card transactions which have been made before termination but which have not actually been debited to the account for the credit card.

### Termination of use of supplementary credit card by cardholder

10.4 Either you or a supplementary cardholder may end the use of a supplementary credit card by:
> notifying us in writing; and
> cutting the card in half.

## 11. Variation

11.1 If you are not comfortable with any changes we make to our banking agreement, you may terminate the account for a credit card in accordance with the procedure in clause 10.

11.2 If we notify you of any changes to our banking agreement in accordance with any applicable law and you keep or use the credit card, the account for the credit card or the PIN/password, you will be deemed to have agreed to the changes.

## 12. Suspicious transactions

We may not honour suspicious transactions (and need not notify you if this is the case).

## 13. Meaning of words

You also need to refer to our Customer Terms which also define key words used in these terms. If a word defined in these terms is also defined in our Customer Terms, the definition in these terms applies for the purposes of accounts for the credit cards.

**balance transfer** means a transaction where we debit an amount you specify from your credit card and pay the amount to another credit card with us or another financial institution.

**cash advance** means cash issued in any currency obtained by using the credit card.

**credit limit** means, for an account for a credit card, the maximum amount you are entitled to have outstanding on the account for the credit card.

**our banking agreement** means the agreement between you and us formed when we accept an application from you, the terms of which include our Customer Terms and these terms.

**supplementary card** means, for an account for a credit card, a credit card issued to a person you authorise as a supplementary cardholder on your account for the credit card.

**supplementary cardholder** means each person to whom we issue a supplementary card.

**Form of Acknowledgement**

I/We agree to the above

Fullname : ....................

Title : ....................

Signature : ....................

Date : ....................

Company seal : ....................
(if applicable)